# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 2 ມິຖຸນາ 2024 (06-02-2024)

---

## ພຣະສັນຍາຂອງພຣະເຈົ້າເລື່ອງການເກີດຜົນ

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າໄດ້ຊົງເອີ້ນມະນຸດຊາດໃຫ້ປົກຄອງເໜືອສິ່ງຊົງສ້າງຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

*ເມື່ອໃດທີ່ທ່ານໄດ້ເຫັນບາງສິ່ງບາງຢ່າງແລະຄິດວ່າ, "ແມ່ນຫຍັງຄືຈຸດປະສົງຂອງອັນນີ້?"*

*ພຣະເຈົ້າໄດ້ຊົງສ້າງທ່ານໂດຍຈຸດປະສົງສຳລັບຈຸດປະສົງ.* ຈົ່ງລອງຄິດເບິ່ງຈັກສອງສາມນາທີກ່ຽວກັບຄວາມໝາຍຂອງຂໍ້ຄວາມນັ້ນ. ຈະເປັນແນວໃດຖ້າຊີວິດມີຈຸດປະສົງ? ຈະເປັນແນວໃດຖ້າຂ້າພະເຈົ້າມີຈຸດປະສົງ, ຈຸດປະສົງສະເພາະ? ຈະເປັນແນວໃດຖ້າມີພຣະເຈົ້າແທ້ໆທີ່ໄດ້ຊົງສ້າງຂ້າພະເຈົ້າໃຫ້ສຳເລັດຈຸດປະສົງຂອງພຣະອົງ, ແລະຖ້າເປັນດັ່ງນັ້ນ, ຈຸດປະສົງນັ້ນແມ່ນຫຍັງ? ຜູ້ຄົນໄດ້ຕອບຄຳຖາມເຫຼົ່ານີ້ໃນຫຼາຍວິທີ:

- "ຊີວິດບໍ່ມີຈຸດປະສົງທີ່ຍືນຍົງ, ສະນັ້ນຂ້າພະເຈົ້າພຽງແຕ່ຈະມີຊີວິດຢູ່ເພື່ອຕົນເອງເທົ່ານັ້ນ."
- "ຂ້າພະເຈົ້າຈະອຸທິດຕົນເອງເພື່ອຈຸດປະສົງສະເພາະເພື່ອເຮັດໃຫ້ໂລກນີ້ເປັນບ່ອນທີ່ໜ້າອາສັຍຢູ່ຫຼາຍກວ່າເກົ່າ."
- "ຈຸດປະສົງຂອງຂ້າພະເຈົ້າແມ່ນການຊົງຮຽກເອີ້ນທີ່ສັກສິດຈາກພຣະເຈົ້າ, ແລະ ຂ້າພະເຈົ້າພົບຄວາມສຸກໃນການເຮັດຕາມພຣະປະສົງຂອງພຣະອົງ."

ຂ້າພະເຈົ້າໄດ້ຍິນຄັ້ງນຶ່ງທີ່ໃຜຜູ້ນຶ່ງໄດ້ເວົ້າວ່າ: "ຫຼາຍຄົນໃຊ້ເວລາໃນການວາງແຜນການພັກຜ່ອນຢຸດງານຫຼາຍກວ່າທີ່ເຂົາເຈົ້າໃຊ້ເວລາວາງແຜນຊີວິດຂອງເຂົາເຈົ້າ." ແທ້ຈິງແລ້ວ, ບາງຄົນມາຮອດຈຸດສຸດທ້າຍຂອງຊີວິດດ້ວຍຄວາມຜິດຫວັງທີ່ເຂົາເຈົ້າບໍ່ໄດ້ດຳເນີນຊີວິດທີ່ມີຈຸດປະສົງ. ພວກເຂົາເຈົ້າເສັຽດາຍທີ່ພາດໂອກາດເຫຼົ່ານີ້. ໃນພຣະຄັມພີປະຖົມມະການ, ພວກເຮົາໄດ້ອ່ານທັສນະຂອງພຣະຄັມພີກ່ຽວກັບພຣະປະສົງຂອງອົງພຣະເຈົ້າສຳລັບມະນຸດ. ພຣະເຈົ້າໄດ້ສ້າງບັນດາຜູ້ຄົນຕາມພຣະສາຍາ(ຮູບພາບ)ຂອງພຣະອົງ ແລະມອບໝາຍໃຫ້ພວກເຂົາເຈົ້າປົກຄອງສິ່ງຊົງສ້າງຂອງພຣະອົງ. <u>ບາບໄດ້ທຳລາຍຮູບພາບຂອງພຣະເຈົ້າໃນຕົວຂອງພວກເຮົາ, ແຕ່ພຣະປະສົງຂອງພຣະເຈົ້າສຳລັບພວກເຮົາຍັງຄົງຢູ່.</u>

**<u>ນັບວ່າເປັນພຣະພອນແທ້ໆທີ່ພວກເຮົາສາມາດເປັນຕົວແທນຂອງພຣະຜູ້ເປັນເຈົ້າ ແລະຈຸດປະສົງຂອງພຣະອົງເທິງແຜ່ນດິນໂລກ!</u>**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ປະຖົມມະການ 1:26-30</u>

*26 ຄັນແລ້ວພຣະເຈົ້າຈຶ່ງຊົງກ່າວວ່າ, "ບັດນີ້ເຮົາຈະສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືເຮົາເອງ ເຂົາຈະມີອຳນາດເໜືອກວ່າປາ, ນົກ, ສັດ
ປ່າ, ແລະສັດເລືອຄານຕ່າງໆ." 27 ດັ່ງນັ້ນພຣະເຈົ້າຈຶ່ງຊົງສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືກັນກັບພຣະອົງ ພຣະອົງໄດ້ຊົງສ້າງຊາຍແລະ
ຍິງ. 28 ຄັນສ້າງແລ້ວກໍຊົງອວຍພອນໃຫ້ແກ່ເຂົາວ່າ, "ຈົ່ງມີລູກເຕົ້າໃຫ້ມາກຫລາຍ ໃຫ້ເຊື້ອສາຍຂອງພວກເຈົ້າມີຢູ່ທົ່ວທຸກແຫ່ງເພື່ອຄຸ້ມ
ຄອງໂລກເຮົາ ໃຫ້ພວກເຈົ້າມີອຳນາດເໜືອກວ່າປາ, ນົກ, ສັດປ່າແລະສັດເລືອຄານທຸກຊະນິດ." 29 ພຣະເຈົ້າຊົງກ່າວຕໍ່ໄປວ່າ, "ສຳລັບ
ພວກເຈົ້າເຮົາໄດ້ໃຫ້ພືດ ແລະໝາກໄມ້ທຸກຊະນິດເປັນອາຫານ. 30 ແຕ່ສຳລັບສັດປ່າ, ສັດເລືອຄານ ແລະຝູງນົກນັ້ນເຮົາໄດ້ໃຫ້ຫຍ້າ
ເປັນອາຫານ" ແລ້ວສິ່ງນັ້ນກໍເກີດມີມາ.*

ພຣະຄັມພີປະຖົມມະການບົດທີ່ 1 ບັນລະຍາຍວິທີການທີ່ພຣະເຈົ້າໄດ້ຊົງສ້າງທຸກໆສິ່ງໂດຍຜ່ານພຣະວາທະຂອງພຣະອົງ. ພຣະອົງໄດ້ຊົງສ້າງໂລກຈາກຄວາມວ່າງເປົ່າ-ນັກເທວະວິທຍາແນວຄວາມຄິດເອີ້ນວ່າ "ເອັກຊ໌ ນີຮີໂລ" (ex nihilo) ຊຶ່ງມີຄວາມໝາຍໃນພາສາລາຕິນວ່າ "ຈາກຄວາມວ່າງເປົ່າ" (from nothing). ທຸກສິ່ງທຸກຢ່າງທີ່ຄົງຢູ່ເພາະພຣະເຈົ້າໄດ້ຊົງກຳນົດໃຫ້ມັນມີຢູ່ (ພຣະນິມິດ 4:11). **ພຣະເຈົ້າໄດ້ຊົງສ້າງໂລກ, ແລະພຣະເຈົ້າຊົງໃຫ້ໂລກຍືນຍົງຢູ່** (ກລຊ 1:16). ຊາວຫ້າຂໍ້ທຳອິດຂອງປະຖົມມະການບົດທີ່ນຶ່ງບັນລະຍາຍການເປີດເຜີຍຂອງແຜນການສ້າງສັນຂອງພຣະເຈົ້າ:

- ມື້ທີ່ 1 ແສງສວ່າງ ແລະ ຄວາມມືດ (ຂໍ້ 3-5)
- ມື້ທີ່ 2 ແຜ່ນຟ້າ ຫຼື ທ້ອງຟ້າ (ຂໍ້ 6-8)
- ມື້ທີ່ 3 ທະເລ, ແຜ່ນດິນ, ແລະພືດ (ຂໍ້ 9-13)
- ມື້ທີ່ 4 ຕາເວັນ, ເດືອນ, ແລະດາວ (ຂໍ້ 14-19)
- ມື້ທີ່ 5 ສັດໃນນໍ້າ, ແລະນົກໃນອາກາດ (ຂໍ້ 20-23)
- ມື້ທີ່ 6 ສັດເທິງແຜ່ນດິນ (ຂໍ້ 24-25)

ສິ່ງຊົງສ້າງທັງໝົດນັ້ນອັສຈັນແລະດີ, ແຕ່ພຣະເຈົ້າຍັງບໍ່ຊົງສຳເລັດສົມບູນ. ຈຸດປະສົງໃນການສ້າງສັນສູງສຸດຂອງພຣະອົງຍັງຄົງຢູ່: **ການຊົງສ້າງມະນຸດຊາດ**. ຂໍ້ 26 ເລີ່ມຕົ້ນດ້ວຍ: *"ບັດນີ້ເຮົາຈະສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືເຮົາເອງ ເຂົາຈະມີອຳນາດເໜືອກວ່າປາ, ນົກ, ສັດປ່າ, ແລະສັດເລືອຄານຕ່າງໆ."* **ໃນຄວາມເປັນຈິງ, ພຣະເຈົ້າໄດ້ຊົງສ້າງພວກເຮົາຕາມພຣະສາຍາຂອງພຣະອົງ:**

- ພຣະເຈົ້າໄດ້ຊົງສ້າງພວກເຮົາໃຫ້ເປັນມະນຸດທີ່ມີເຫດຜົນ. ພວກເຮົາມີຈິດໃຈທີ່ສາມາດຫາເຫດຜົນແລະສລຸບໄດ້. ພວກເຮົາໃຊ້ຫົວຄິດ, ປຸງແຕ່ງຄວາມຄິດຂອງພວກເຮົາ, ປຸງແຕ່ງຮູບພາບ, ແລະປຸງແຕ່ງຫົວຄິດປະດິດສ້າງ.
- ພຣະເຈົ້າໄດ້ຊົງສ້າງພວກເຮົາໂດຍພຣະປະສົງ, ແລະພວກເຮົາມີຄວາມສາມາດທີ່ຈະເລືອກເອົາລະຫວ່າງທາງເລືອກຕ່າງໆ.
- "ພວກເຮົາຖືກສ້າງຂຶ້ນທັງທາງຮ່າງກາຍແລະທາງຈິດວິນຍານ, ການປຸງແຕ່ງທັງຮ່າງກາຍແລະຈິດວິນຍານ. ດ້ວຍວິທີນີ້, ພວກເຮົາແຕກຕ່າງຈາກສິ່ງທີ່ມີຊີວິດອື່ນໆ. ມະນຸດຊາດເປັນສະຖານທີ່ຊຶ່ງວັດຖຸແລະຈິດວິນຍານຢູ່ຮ່ວມກັນ."

ໃຫ້ພວກເຮົາສຸມໃຈໃສ່ມຸມນຶ່ງຂອງການເປັນພາບພົດຂອງພຣະເຈົ້າ, ພວກເຮົາສົມຄວນທີ່ຈະສະແດງໃຫ້ເຫັນພຣະລັກສນະຂອງພຣະອົງ ໃນຂນະທີ່ພວກເຮົາປົກຄອງເໜືອສິ່ງຊົງສ້າງຂອງພຣະອົງ. ນີ້ແມ່ນບາງຍຸດທະສາດທີ່ພວກເຮົາສົມຄວນຈະຕ້ອງນຳໄປໃຊ້: (1) ເກັບຂີ້ເຫຍື້ອເພື່ອຄວາມສວຍງາມຂອງຖະໜົນ ແລະເຂດໄກ້ຄຽງບ້ານຂອງພວກເຮົາ. (2) ສນັບສນູນການປະຕິບັດຕໍ່ຝູງສັດຢ່າງມີມະນຸສທັມ. (3) ປະຕິບັດຕາມຂັ້ນຕອນເພື່ອຮັບປະກັນອາກາດແລະນ້ຳໃຫ້ສະອາດ. (4) ຊຸກຍູ້ຄວາມຍຸຕິທັມໃຫ້ແກ່ປະຊາຊົນທຸກຄົນ.

ໃນເບື້ອງຕົ້ນ, ພຣະເຈົ້າໄດ້ຊົງໃຫ້ພືດທີ່ມີເມັດພັນ ແລະຕົ້ນໄມ້ໃຫ້ໝາກເປັນແຫຼ່ງອາຫານບໍ່ພຽງແຕ່ສຳລັບຄົນ ແຕ່ສຳລັບສັດແລະນົກທັງໝົດອີກດ້ວຍ. ການເຂົ້າມາໃນໂລກຂອງຄວາມບາບໄດ້ປ່ຽນແປງຄວາມສັມພັນຂອງມະນຸດກັບອານາຈັກສັດ (ປຖກ 9:2-3). ດຽວນີ້ບັນດາສັດຈະຢ້ານກົວຄົນ, ແລະຜູ້ຄົນມີອິສຣະທີ່ຈະກິນພວກສັດເປັນອາຫານຕາມໃຈຊອບຂອງພວກເຂົາເຈົ້າ.

ພຣະເຈົ້າໄດ້ຊົງໃຫ້ຄຸນຄ່າຂອງການຊົງສ້າງທັງໝົດຂອງພຣະອົງ ແລະ ຊົງຄາດຫວັງໃຫ້ປະຊາຊົນຂອງພຣະອົງເຮັດດັ່ງດຽວກັນ.

*ແມ່ນຫຍັງຄືຜົນປໂຍດບາງຢ່າງຂອງການຮັບຮູ້ພາຣະກິດຂອງພຣະເຈົ້າ?*

## 2. ປະຖົມມະການ 2:16-17

*16 ພຣະອົງຊົງສັ່ງແກ່ຊາຍຜູ້ນັ້ນວ່າ, "ໝາກໄມ້ທຸກໆຕົ້ນໃນສວນນີ້ເຈົ້າກິນໄດ້ໝົດ. 17 ເວັ້ນໄວ້ແຕ່ຕົ້ນທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວເຈົ້າຢ່າກິນ, ຖ້າເຈົ້າຂືນກິນໝາກໄມ້ໃນຕົ້ນນີ້ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ."*

ຄຳວ່າ "ພັນທະສັນຍາ" ອາດຈະຖືກກຳນົດໃຫ້ເປັນຂໍ້ຕົກລົງຢ່າງເປັນທາງການທີ່ສ້າງຄວາມສັມພັນລະຫວ່າງທັງສອງຝ່າຍ. ໂດຍປົກກະຕິແລ້ວ, ແຕ່ລະຝ່າຍຈະໃຫ້ຄຳໝັ້ນສັນຍາຕໍ່ກັນແລະກັນ. ຂໍ້ຕົກລົງຂອງພຣະເຈົ້າກັບ ອາດາມແລະເອວາ ເປັນປະເພດຂອງພັນທະ

ສັນຍາ. ໃນຄວາມສັມພັນແຫ່ງພັນທະສັນຍານີ້, ພຣະເຈົ້າຊົງມຸ່ງຫວັງການເຊື່ອຟັງແລະຄວາມສັດຊື່. ບາງຄັ້ງບັນດາຊາວຄຣິສະຕຽນສັບສົນກັບແນວຄິດຂອງການເຊື່ອຟັງເພາະວ່າພວກເຂົາເຈົ້າໄດ້ຮຽນຮູ້(ໂດຍຖືກຕ້ອງ!)ວ່າພວກເຂົາເຈົ້າກາຍມາເປັນຄຣິສະຕຽນໂດຍພຣະຄຸນຜ່ານທາງຄວາມເຊື່ອພຽງຢ່າງດຽວ, ນອກເໜືອຈາກວຽກງານໃດໆທີ່ພວກເຂົາເຈົ້າເຮັດ (ອຟຊ 2:8-9). **ຄວາມລອດພົ້ນແມ່ນຂອງຂວັນຈາກພຣະເຈົ້າ, ແລະພວກເຮົາບໍ່ສາມາດເຮັດຫຍັງເພື່ອໃຫ້ໄດ້ຄວາມລອດພົ້ນນັ້ນມາໂດຍຕົນເອງ.** ພຣະເຈົ້າໄດ້ຊົງສ້າງພວກເຮົາເພື່ອໃຫ້ປະກອບການດີ (ອຟຊ 2:10). ການເຊື່ອຟັງຂອງພວກເຮົາເປັນພຍານແຫ່ງຄວາມສັມພັນຂອງພວກເຮົາກັບພຣະອົງແລະສະແດງໃຫ້ໂລກໄດ້ເຫັນວິຖີຊີວິດທີ່ພຣະເຈົ້າໄດ້ຊົງຮຽກເອີ້ນໃຫ້ພວກເຮົາດຳຣົງຢູ່. ພວກເຮົາບໍ່ໄດ້ເຊື່ອຟັງພຣະເຈົ້າໂດຍຫວັງຈະໄດ້ "ຄະແນນ". **ພວກເຮົາເຊື່ອຟັງພຣະເຈົ້າເພາະວ່າພວກເຮົາຮັກພຣະອົງ!** ນອກຈາກນັ້ນ, ວິທີທາງຂອງພຣະເຈົ້າແມ່ນດີທີ່ສຸດອີກດ້ວຍ. ພຣະເຈົ້າໄດ້ຊົງສ້າງ ອາດາມ ແລະໄດ້ຊົງວາງລາວໄວ້ໃນສວນທີ່ພຣະອົງຊົງສ້າງຂຶ້ນ-ເປັນບ່ອນທີ່ໜ້າຊື່ນຊົມທີ່ມີຕົ້ນໄມ້ກິນໝາກທຸກປະເພດ. ພຣະເຈົ້າໄດ້ຊົງມອບໝາຍວຽກງານໃຫ້ລາວດູແລສວນ(ປຖກ 2:8,15). ວຽກງານເຮັດໃຫ້ ອາດາມ ມີໂອກາດທີ່ຈະຄຸ້ມຄອງສ່ວນນຶ່ງຂອງການຊົງສ້າງຂອງພຣະເຈົ້າ. ຕົ້ນໄມ້ອີກສອງຕົ້ນຕັ້ງຢູ່ໃນສວນ: ຕົ້ນໄມ້ທີ່ໃຫ້ຊີວິດ ແລະ ຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ(ຂໍ້ 9). ພຣະເຈົ້າໄດ້ຊົງບອກ ອາດາມ ວ່າລາວມີອິສຣະທີ່ຈະກິນຈາກຕົ້ນໄມ້ໃດກໍ່ໄດ້ໃນສວນນັ້ນ ຍົກເວັ້ນ ຈາກຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ. **ຖ້າຫາກວ່າລາວກິນຈາກຕົ້ນໄມ້ນີ້, ລາວຈະຕ້ອງຕາຍ.** ຫຼັງຈາກພຣະເຈົ້າໄດ້ຊົງສ້າງ ເອວາໃຫ້ເປັນຄູ່ ອາດາມ(ຂໍ້ 18-23), ຜົວເມັຽຄູ່ທຳອິດຂອງໂລກໄດ້ແບ່ງປັນຄວາມຮັບຜິດຊອບຂອງການດຳເນີນຊີວິດຕາມພຣະຣາຊດຳຣັດ(ຄຳສັ່ງ)ຂອງພຣະເຈົ້ານຳກັນໃນສວນ. ຄຳສັ່ງອັນດຽວນີ້-ຫ້າມກິນຈາກຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ-ໄດ້ທົດສອບ**ຄວາມໄວ້ວາງໃຈ, ການເຊື່ອຟັງ,** ແລະ **ຄວາມສັດຊື່** ຂອງອາດາມແລະເອວາ. ບາງຄັ້ງຊາວຄຣິສະຕຽນເຂົ້າໃຈ ຄວາມລອດພົ້ນໂດຍພຣະຄຸນ ໝາຍຄວາມວ່າພວກເຂົາເຈົ້າມີອິສຣະທີ່ຈະຄົ້ນຫາຂອບເຂດຈຳກັດຂອງເສຣີພາບຂອງພວກເຂົາເຈົ້າ. ບາງຄົນແກ້ຕົວຕໍ່ພຶດຕິກັມຂອງພວກເຂົາເຈົ້າໂດຍເວົ້າວ່າ: "ຂ້ອຍສາມາດໄປໄດ້ໄກຂະໜາດນີ້ ແລະຍັງເປັນຄຣິສະຕຽນຢູ່" ຫຼື "ຂ້ອຍຈະຂໍອະພັຍໂທດພາຍຫຼັງ." ການຄິດແບບນັ້ນເຂົ້າໃຈຄວາມໝາຍຂອງ **ພຣະຄຸນ** ຜິດໄປ. ພຣະຄຸນເຮັດໃຫ້ພວກເຮົາມີອິສຣະເພື່ອຮັບໃຊ້ພຣະເຈົ້າ, ບໍ່ແມ່ນເພື່ອ ຮັບໃຊ້ຕົນເອງ. ແທ້ຈິງແລ້ວ, ການຊົງຮຽກເອີ້ນພວກເຮົາໃຫ້ຄູ້ມຄອງສິ່ງຊົງສ້າງຂອງພຣະເຈົ້າບໍ່ແມ່ນປາສຈາກຂອບເຂດ. ຄວາມຮັບຜິດຊອບຂອງພວກເຮົາມາພ້ອມກັບຂໍ້ກຳນົດການທີ່ພຣະເຈົ້າຊົງສ້າງຕັ້ງຂຶ້ນ, ແລະພວກເຮົາມີອິສຣະໃນການບໍຣິຫານພາຍໃນຂໍ້ກຳນົດເຫຼົ່ານັ້ນ. **ແຕ່ການອອກໄປນອກຂອບເຂດຂອງຂໍ້ກຳນົດເຫຼົ່ານັ້ນນຳເອົາບາບແລະຄວາມລົ້ມເຫຼວມາສູ່ຕົນເອງ.**

*ປະຕິກິຣິຍາຂອງພວກເຮົາຕໍ່ກົດລະບຽບຂອງພຣະເຈົ້າເປີດເຜີຍໃຫ້ເຫັນຫົວໃຈຂອງພວກເຮົາຕໍ່ພຣະເຈົ້າໃນທາງໃດ?*

### 3. ປະຖົມມະການ 3:16-19

*16 ແລ້ວພຣະອົງຊົງກ່າວກັບຜູ້ຍິງນັ້ນວ່າ: "ເຮົາຈະເພີ່ມຄວາມຫຍຸ້ງຍາກໃຫ້ແກ່ເຈົ້າເວລາຖືພາ ແລະຈະໃຫ້ເຈົ້າອອກລູກດ້ວຍຄວາມເຈັບປວດເຖິງປານນັ້ນເຈົ້າກໍຍັງຢາກໄດ້ຜົວຢູ່ແລະຜົວນັ້ນຈະເປັນນາຍປົກຄອງເຈົ້າ." 17 ດັ່ງນັ້ນແລ້ວພຣະຜູ້ເປັນເຈົ້າຊົງກ່າວກັບອາດາມວ່າ: "ເຈົ້າໄດ້ເຊື່ອຟັງເມັຽຂອງເຈົ້າ ເຈົ້າກິນໝາກໄມ້ຊຶ່ງເຮົາໄດ້ຫ້າມ ຍ້ອນສິ່ງທີ່ເຈົ້າໄດ້ກະທຳມານັ້ນຂີ້ດິນຈະຖືກສາບແຊ່ງ ກ່ອນຈະໄດ້ອາຫານມາລ້ຽງຊີບ ເຈົ້າຈະຕ້ອງເຮັດວຽກຢ່າງໜັກຊຸດດິນຟັນໄມ້ຈົນໜ້າແຫລ້ໜ້າກ່ຳຕລອດຊີວິດຂອງເຈົ້າ. 18 ຕົ້ນໄມ້ແລະພືດຕ່າງໆທີ່ມີໜາມຈະເກີດຂຶ້ນສຳລັບເຈົ້າແລະຈະກິນພືດນັ້ນເປັນອາຫານ. 19 ເຈົ້າຈະຕ້ອງຫາລ້ຽງຊີບດ້ວຍເຫື່ອໄຫລໄຄຍ້ອຍຈົນກວ່າເຈົ້າຈະສິ້ນຊີວິດກັບຄືນໄປສູ່ດິນບ່ອນທີ່ເຈົ້າມາ ເຈົ້າມາແຕ່ດິນເຈົ້າຈະຕ້ອງກັບໄປເປັນດິນອີກ."*

ຫຼາຍຄົນໃຫ້ເຫດຜົນກ່ຽວກັບການເຮັດບາບຂອງພວກເຂົາເຈົ້າໂດຍການເວົ້າວ່າ: "**ຂ້ອຍດີກວ່າຫຼາຍຄົນ**" ຫຼືບາງທີພວກເຂົາເຈົ້າໄດ້ແກ້ຕົວບາບໂດຍການອ້າງວ່າ: "**ທຸກຄົນເຮັດແບບນັ້ນ ມັນບໍ່ແມ່ນເລື່ອງໃຫຍ່.**" ແຕ່ວ່າບາບເປັນເລື່ອງໃຫຍ່. ບາບຂັດຂວາງຄວາມສັມພັນຂອງພວກເຮົາກັບພຣະເຈົ້າ, ຄືກັນກັບບາບຕໍ່ຜູ້ຄົນສາມາດຂັດຂວາງຄວາມສັມພັນຂອງພວກເຮົາກັບພວກເຂົາເຈົ້າ. ໃນເມື່ອ ອາດາມ ແລະ ເອວາ ໄດ້ເຮັດບາບໂດຍການບໍ່ເຊື່ອຟັງພຣະດຳຣັດ(ຄຳສັ່ງ)ຂອງພຣະເຈົ້າ (ປຖກ 3:1-6), ມີບາງສິ່ງໄດ້ເກີດຂຶ້ນ:

**(1)** ພວກເຂົາເຈົ້າໄດ້ມີຄວາມຮູ້ສຶກລະອາຍໃນທັນທີທັນໃດ (ຂໍ້ 7). **(2)** ພວກເຂົາເຈົ້າໄດ້ລີ້ຕົວຫຼົບໜີຈາກພຣະເຈົ້າ (ຂໍ້ 8-10). **(3)** ພວກເຂົາເຈົ້າໃດ້ໃສ່ຮ້າຍຖິ້ມໂທດໃຫ້ຄົນອື່ນ (ຂໍ້ 12-13). ອາດາມຖິ້ມໂທດໃຫ້ເອວາແລະພຣະເຈົ້າ, ແລະເອວາຖິ້ມໂທດໃຫ້ໂຕງູ.

ຄວາມບາບຂອງ ອາດາມ ແລະ ເອວາ ໄດ້ສົ່ງຜົນຮ້າຍແຮງມາສູ່ພວກເພິ່ນຄື: ຢ່າງໃດກໍ່ຕາມ, ທໍາອິດ, ພຣະເຈົ້າໄດ້ຊົງປະທານພຣະວາທະ(ຄໍາເວົ້າ)ແຫ່ງຄວາມຫວັງແລະພຣະຄຸນໃນຂໍ້ 15. ມື້ນຶ່ງ, ເຊື້ອສາຍຂອງຜູ້ຍິງຈະຢຽບຫົວງູ. ນັກວິຊາການຫຼາຍຄົນເຫັນວ່າຖ້ອຍຄໍາຂອງພຣະເຈົ້າເປັນການທໍານວາຍຂອງການຊົງສະເດັດມາຂອງພຣະເຢຊູ. ໂດຍການສິ້ນພຣະຊົນແລະການຟື້ນຄືນພຣະຊົນ, ພຣະເຢຊູຈະຊົງຟາດຫົວຂອງງູ-ນັ້ນຄືພຣະອົງຈະຊົງທໍາລາຍບັນດາພວກຊາຕານຄັ້ງດຽວຕລອດໄປ.

*ບາບໄດ້ເຮັດໃຫ້ການດູແລສິ່ງຊົງສ້າງຂອງພຣະເຈົ້າໃຫ້ຍາກຂຶ້ນດ້ວຍວິທີໃດແດ່?*

ໃນທີ່ສຸດ, ພຣະຄຸນຂອງພຣະເຈົ້າຈະມີຊັຍຊນະ, ແຕ່ຜົນລັບທີ່ຕາມມາຈາກຄວາມບາບຈະພິສູດໃຫ້ເຫັນເຖິງຄວາມຫາຍນະ (ຄວາມຈິບຫາຍ)ສໍາລັບມະນຸດຊາດ. ເຊື້ອສາຍຂອງ ອາດາມແລະເອວາ ທຸກຄົນໄດ້ແບກຮັບຜົນຮ້າຍຈາກບາບໄວ້ໃນຕົວຂອງພວກເຂົາເຈົ້າ. **<u>ພວກເຮົາເກີດມາເປັນຄົນບາບ, ແລະພວກເຮົາເລືອກທີ່ຈະເຮັດບາບ</u>.** ແຜນການຂອງພຣະເຈົ້າສໍາລັບພວກເຮົາທີ່ຈະຮັບໃຊ້ເປັນຜູ້ດູແລເໜືອສິ່ງຊົງສ້າງຂອງພຣະອົງບໍ່ໄດ້ປ່ຽນແປງ. ແນວໃດກໍ່ຕາມ, <u>ຄວາມສາມາດຂອງພວກເຮົາທີ່ຈະປະຕິບັດຕາມແຜນການຂອງພຣະເຈົ້ານັ້ນແມ່ນຍາກຂຶ້ນຍ້ອນຄວາມບາບຂອງພວກເຮົາ</u>.

ອີກວິທີນຶ່ງທີ່ຄວາມບາບໄດ້ເຮັດໃຫ້ການດູແລສິ່ງຊົງສ້າງຂອງພຣະເຈົ້າໃຫ້ເປັນເຣື່ອງທີ່ຍາກຫຼາຍຂຶ້ນ ແມ່ນການກ່ຽວຂ້ອງກັບໜ່ວຍໂລກ(ແຜ່ນດິນ)ມັນເອງ. <u>ນັ້ນຄື</u>: ບາບໄດ້ນໍາເອົາຄໍາສາບແຊ່ງມາສູ່ພື້ນດິນ, ຊຶ່ງຈະເຮັດໃຫ້ເກີດໜາມ ຄວບຄູ່ໄປກັບພືດຊະນິດທີ່ຜູ້ຄົນປູກຝັງແລະເກັບກ່ຽວ. ມະນຸດຊາດຕ້ອງໄດ້ເຮັດວຽກໜັກຂຶ້ນຫຼາຍກວ່າເກົ່າເພື່ອຊອກຫາອາຫານຂອງພວກເພິ່ນ. ພຣະເຈົ້າໄດ້ຊົງບອກອາດາມ ວ່າຖ້າລາວຫາກຂືນກິນຈາກຕົ້ນໄມ້ທີ່ໃຫ້ຊີວິດ ແລະ ຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ, ລາວຈະຕ້ອງຕາຍ (ຂໍ້ 17). **<u>ອາດາມໄດ້ກິນມັນເຂົ້າໄປແລ້ວ, ແລະຕອນນີ້ລາວຈະຕ້ອງຕາຍ-ຄ່າຂອງຄວາມບາບນັ້ນສູງ</u>!**

*ທ່ານເຫັນຄວາມສັດຊື່, ພຣະຄຸນ, ແລະຄວາມເມດຕາຂອງພຣະເຈົ້າຢູ່ໃສໃນຂໍ້ພຣະຄັມພີເຫຼົ່ານີ້?*

## ນໍາໃຊ້ໃນຊີວິດ

ພຣະເຈົ້າໄດ້ຊົງເອີ້ນມະນຸດຊາດໃຫ້ປົກຄອງເໜືອສິ່ງຊົງສ້າງຂອງພຣະອົງ. ຈົ່ງໃຊ້ນຶ່ງໃນການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງຝຶກຝົນການເບິ່ງແຍງທີ່ພຣະເຈົ້າຊົງປະທານໃຫ້.** ພຣະເຈົ້າຊົງປະທານຄວາມຮັບຜິດຊອບແກ່ຜູ້ຄົນໃນການຄຸ້ມຄອງສິ່ງຊົງສ້າງຂອງພຣະອົງ. ຈົ່ງຂຽນລາຍການວິທີທີ່ຊີວິດຂອງທ່ານສະແດງເຖິງການເບິ່ງແຍງເຫຼົ່ານັ້ນ.
- **ຈົ່ງສະແດງໃຫ້ເຫັນການເຊື່ອຟັງແລະຄວາມສັດຊື່ຕໍ່ພຣະເຈົ້າ.** ລະດັບຄວາມເຊື່ອຂອງທ່ານໄດ້ສະແດງອອກເຖິງຄວາມສັດຊື່ຕໍ່ພຣະເຈົ້າໂດຍວິທີໃດ? ກໍານົດບ່ອນໃນຊີວິດຂອງທ່ານໃນບ່ອນທີ່ທ່ານຕ້ອງການຄວາມຊ່ວຍເຫຼືອຈາກພຣະເຈົ້າ ເພື່ອໃຫ້ສັດຊື່ຫຼາຍຂຶ້ນ.
- **ຈົ່ງກັບໃຈຈາກບາບໃນຊີວິດຂອງທ່ານ.** ໂລກທຸກມື້ນີ້ເຍາະເຍີ້ຍຄວາມບາບ, ແຕ່ພຣະຄັມພີຊົງບອກວ່າບາບເປັນທຸລະກິດທີ່ຮ້າຍແຮງ. ຈົ່ງທູນຂໍໃຫ້ພຣະເຈົ້າຊົງເຮັດໃຫ້ທ່ານຮູ້ເຖິງບາບທີ່ຕ້ອງໄດ້ຮັບການສາລະພາບ ເພື່ອວ່າຄວາມສັມພັນຂອງທ່ານກັບພຣະເຈົ້າຈະເປັນໄປໄດ້ທັງໝົດທີ່ສາມາດເປັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**